ວິທີການປູກຂ່າ

ໂດຍ: ວຽງໄຊ ຢາຈູຕົວ, ສູນຈໍ້ມູນຂ່າວສານ

ຂ່າມີຊື່ເປັນພາສາອັງກິດว่า: Galangal. ໃນຕະກຸນ: Zingiberceae. ມີຊື່ວິທະຍາສາດว่า: Languas galangal Linn. Stuntz. ຂ່າເປັນພືດຜັກທີ່ມີຖິ່ນກຳເນີດ ໃນແຖບອຊີຕາເວັນຕົກສຽງໃຕ້ເປັນພືດພື້ນເມືອງທີ່ນຳໃຊ້ທຸກພາກສ່ວນ ເປັນພືດທີ່ມີອາຍຸຍາວ, ກິ່ນກອມ ແລະ ລຳຕົ້ນເປັນສີນ້ຳຕານຂາວຢູ່ພື້ນດິນ ສ່ວນກົກ ແລະ ໃບແມ່ນຢູ່ເໜືອພື້ນດິນ ປະມານ 100 ຫາ 150 ຊຕມ, ສາມາດຈະເລີນເຕີບໂຕໄດ້ດີກວ່າໃນບໍລິເວນດິນລ້ວນຜຸຜຸ່ຍ ຄວາມອຸດົມສົມບູນປານກາງ ແຕ່ບໍ່ມັກນ້ຳຖ້ວມຂັງ. ຂ່າເປັນພືດທີ່ນຳມາປະກອບອາຫານໄດ້ຫຼາຍຊະນິດ. ນອກນັ້ນຍັງຈັດຢູ່ໃນປະເພດພືດສະໝຸນໄພ ໃນການປຸງແຕ່ງຢາພື້ນເມືອງ.

1. ການກະກຽມແນວພັນ
   - ຂ່າທີ່ຈະນຳມາຂະຫຍາຍພັນຄວນມີອາຍຸຕ່ຳກ່ວາ 1 ປີ ຂຶ້ນໄປ.
   - ຕັດແຍກຫົວຄ່າແກ່ ແລະ ຫໍ່ ປະມານ 2 ຫາ 3 ຫໍ່/ຕົ້ນ.
   - ຕັດຮາກ, ຕັດໃບ ແລະ ກ້ານອອກຈົ່ງປະໄວ້ປະມານ 30 ຊຕມ.
   - ອັດຕາແນວພັນທີ່ຊ້ປະມານ 1,700 ກິໂລ/ເຮັກຕາ.(1ກິໂລ ປູກໄດ້ 4 ຂຸມ).
   - ເນື້ອທີ່ 1 ເຮັກຕາ ຈະປູກໄດ້ປະມານ 4,800 ຕົ້ນ.

2. ການກຽມດິນ
   - ໄຖພວນ ຫຼື ຄາດດິນໃຫ້ເລິກ ປະມານ 25 ຫາ 30 ຊຕມ.
   - ຕາກດິນໄວ້ປະມານ 6 ຫາ 7 ມື້.
   - ປັບໜ້າດິນ ລະ ໃສ່ຝຸ່ນຄອກ ຫຼື ຝຸ່ນບົ່ມ.
   - ຂະໜາດຂອງຂຸມແມ່ນ 50 ຄູນ 50ຊຕມ.
   - ໄລຍະຫ່າງລະຫວ່າງຕົ້ນ ແມ່ນ 1 ຄູນ 1 ມ.
2. ວິທີປູກ
   - ນຳເອົາແນວພັນທີ່ກຽມໄວ້ ລົງຂຸມ ປະມານ 2 ຫາ 3 ຕົ້ນ.
   - ປົກໜ້າດິນໃສ່ຝຸ່ນສູດ: 15 – 15 – 15 ປະມານ120 ກິໂລ/ເຮັກຕາ ແລະ ໃສ່ 2 ເທື່ອຕໍ່ປີ.
   - ປົກປາກຂຸມດ້ວຍຫຍ້າແຫ້ງ ແລະ ຫົດນ້ຳໃຫ້ດິນຊຸ່ມ.

4. ການບົວລະບັດຮັກສາ

ການໃສ່ຝຸ່ນ: ເມື່ອຕົ້ນຄ່າມີອາຍຸ 25 ຫາ 30 ມື້ ໃຫ້ໃສ່ຝຸ່ນຄອກໃນອັດຕາ 150 ຫາ 300 ກິໂລ/ ເຮັກຕາ ໃສ່ຝຸ່ນສູດ: 15-15-15 ປະມານ 120 ກິໂລ/ເຮັກຕາ ໃຫ້ໃສ່ 2 ເທື່ອຕໍ່ປີ. ສ່ວນຝຸ່ນບຳລຸງຫົວຂ່າ ແມ່ນໃຫ້ໃສ່ສູດ: 13-13-21 ໃສ່ທຸກໆເດືອນ ໃນປີທຳອິດປະມານ 1 ບ່ວງແກງ/ຕົ້ນ ໂຮຍບໍ ລິເວນຊົ່ງຟຸ່ມ ແລ້ວຫົດນ້ຳ.

ການໃຫ້ນ້ຳ: ໄລຍະທຳອິດຂອງການປູກຄວນໃຫ້ນ້ຳ 2 ເທື່ອ/ມື້ ໃນຊ່ວງລະດູຝົນແມ່ນບໍ່ຈຳເປັນໃຫ້ນ້ຳ.ໃນຊ່ວງລະ ດູແລ້ງແມ່ນໃຫ້ນ້ຳອາທິດລະເທື່ອ ພໍໃຫ້ດິນຊຸ່ມ.

ການເສຍຫຍ້າ:ໃນໄລຍະທຳອິດຫຼັງຈາກປູກ ແມ່ນໃຫ້ເສຍຫຍ້າ 3 ເທື່ອ/ປີ.

3. ການເກັບກ່ຽວ

ຄ່າອ່ອນແມ່ນເກັບໄດ້ຫຼັງປູກປະມານ 6 ຫາ 8 ເດືອນ ແລະ ສາມາດເກັບໄດ້ຍາວຮອດ 10 ປີ, ຂ່າອ່ອນທີ່ສາ ມາດເກັບກ່ຽວໄດ້ ແມ່ນສັງ ເກດເບິ່ງຕົ້ນທີ່ມີໃບ 2ຫາ3ໃບ